ສຳນັກງານ ຄຄຊ
ເລກທີ...0695...
ວັນທີ 19 JUL 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 29 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 18 ກໍລະກົດ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 01-05/07/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,05% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດ ສ. ອາເມຣິກາອອກມາດີ ເຫັນໄດ້ຈາກຕົວເລກການຈ້າງງານນອກຂະແໜງການກະສິກຳ ໃນເດືອນ 06/2019 ເພີ່ມຂຶ້ນ 224.000 ຕຳແໜ່ງ ຈາກເພີ່ມຂຶ້ນພຽງແຕ່ 72.000 ຕຳແໜ່ງ ໃນເດືອນຜ່ານມາ ແລະ ຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດ ປະຈຳອາທິດທີ 29/06/2019 ມີ 221.000 ຄົນ ຊຶ່ງຫຼຸດລົງຈາກຈຳນວນ 229.000 ຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 24-28/06/2019 | ອາທິດນີ້ 01-05/07/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1385 | 1,1267 | 1,05% |
| ເຢນ/ໂດລາ | 107,69 | 108,03 | -0,31% |
| ບາດ/ໂດລາ | 30,680 | 30,650 | 0,10% |
| ເປໂຊ/ໂດລາ | 51,30 | 51,19 | 0,22% |
| ຣູເປັຍ/ໂດລາ | 14.130,00 | 14.085,00 | 0,32% |
| ໂດລາສິງກະໂປ/ໂດລາ | 1,3533 | 1,3357 | 1,32% |
| ຢວນ/ໂດລາ | 6,8678 | 6,8767 | -0,13% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 4,18% ຈາກ 59,39 ໂດລາ/ບາເຣວ ມາເປັນ 56,91 ໂດລາ/ບາເຣວ ເນື່ອງຈາກການສະໜອງສູງກວ່າຄວາມຕ້ອງການນ້ຳມັນ ເຫັນໄດ້ຈາກຄັງສຳຮອງນ້ຳມັນກາຊວນຂອງ ສ.ອາເມລິກາ ເພີ່ມຂຶ້ນ 1,41 ລ້ານບາເຣວ ໃນອາທິດທີ 28/06/2019 ຈາກຫຼຸດລົງ 2,44 ລ້ານບາເຣວ ໃນອາທິດຜ່ານມາ. ພ້ອມກັນນັ້ນ, ລາຄານ້ຳມັນຍັງໄດ້ຮັບແຮງກົດດັນຈາກຕົວເລກອຸດສາຫະກຳຂອງອາຊີ ແລະ ເອີຣົບ ມີທ່າອ່ຽງຫຼຸດລົງ ຊຶ່ງສະແດງໃຫ້ເຫັນເຖິງສະພາບເສດຖະກິດໂລກຂະຫຍາຍຕົວຫຼຸດລົງ ແລະ ອາດສົ່ງຜົນເຮັດໃຫ້ອຸປະສົງການນຳໃຊ້ນ້ຳມັນດິບຫຼຸດລົງ;
- ລາຄາຄຳ ເພີ່ມຂຶ້ນ 0,08% ຈາກ 1.413,08 ໂດລາ/ອອນ ມາເປັນ 1.414,25 ໂດລາ/ອອນ ເນື່ອງຈາກຄວາມຜັນຜວນຂອງຄ່າເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບເງິນຕາພາຍໃນ

### 2.1 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 07/2019 ຢູ່ໃນລະດັບ 2,80%.

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,78% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,37%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,001% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,34%.

### 2.3 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,09% ແລະ ອ່ອນຄ່າລົງ 0,56% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,47% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 7,49% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 24-28/06/2019 | | | ອາທິດນີ້ 01-05/07/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.721,55 | 8.748,63 | 8.735,80 | 8.734,28 | 8.751,47 | 8.743,26 | -0,15% | -0,03% | -0,09% | -1,52% | -1,41% | -1,47% |
| ບາດ | 286,32 | 287,49 | 287,01 | 287,81 | 289,12 | 288,62 | -0,52% | -0,56% | -0,56% | -7,51% | -7,49% | -7,49% |

### 2.4 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (28/06-04/07/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຊື້ເງິນໂດລາສຸດທິ 3,32 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 21,66 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 18,34 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 198,91 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 190,97 ລ້ານບາດ ແລະ ຂາຍເງິນບາດໄດ້ 389,88 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 8,82% ແລະ ເງິນບາດຫຼຸດລົງ 10,09%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ບໍ່ມີການເຄື່ອນໄຫວ;

[1] % ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 2,00 ລ້ານໂດລາ ແລະ ເງິນບາດ ຈຳນວນ 14,40 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ບໍ່ມີການເຄື່ອນໄຫວ.

**ສະພາບການຊື້-ຂາຍເງິນຕາຕ່າງປະເທດ** (ຫົວໜ່ວຍ: ລ້ານ)

| | **ອາທິດກ່ອນ 21-27/06/2019** | | **ອາທິດນີ້ 28/06-04/07/2019** | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **24,10** | **249,46** | **21,66** | **190,97** | **-10,12%** | **-23,45%** |
| - ທ/ຄທຸລະກິດລັດ | 12,24 | 57,96 | 8,05 | 61,79 | -34,23% | 6,61% |
| - ທ/ຄທຸລະກິດອື່ນໆ | 11,86 | 191,50 | 13,61 | 129,18 | 14,76% | -32,54% |
| 2. ການຂາຍເງິນຕາຕ່າງປະເທດ | **19,77** | **396,61** | **18,34** | **389,88** | **-7,23%** | **-1,70%** |
| - ທ/ຄທຸລະກິດລັດ | 7,60 | 94,00 | 6,75 | 91,45 | -11,18% | -2,71% |
| - ທ/ຄທຸລະກິດອື່ນໆ | 12,17 | 302,61 | 11,59 | 298,43 | -4,77% | -1,38% |
| ຊື້-ຂາຍສຸດທິ ທທກ | **4,33** | **-147,15** | **3,32** | **-198,91** | **-23,33%** | **35,17%** |
| - ຜົດດ່ຽງຊື້-ຂາຍ | 17,97% | -58,99% | 15,33% | -104,16% | -14,70% | 76,57% |
| - ມູນຄ່າການຊື້-ຂາຍ | **43,87** | **646,07** | **40,00** | **580,85** | **-8,82%** | **-10,09%** |
| 3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ | **0,00** | **0,00** | **0.00** | **0.00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0.00 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 0,00 | 0,00 | 0.00 | 0.00 | | |
| 4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ | **0,03** | **61,10** | **2,00** | **14,40** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0.00** | **0.00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0.00 | 0.00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0.00 | 0.00 | | |

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (28/06-04/07/2019) ຈຳນວນ 42,42 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼເຂົ້າມີຈຳນວນ 212,42 ລ້ານໂດລາ (ສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 54,82 ລ້ານໂດລາສະຫະລັດ, ທະນາຄານທຸລະກິດຮັບເງິນກູ້ຢືມຈາກຕ່າງປະເທດ 68 ລ້ານໂດລາສະຫະລັດ, ຖອນເງິນຝາກຈາກສະຖາບັນການເງິນຢູ່ຕ່າງປະເທດ ຈຳນວນ 62,51 ລ້ານໂດລາສະຫະລັດ). ສ່ວນກະແສເງິນໄຫຼອອກມີຈຳນວນ 170,00 ລ້ານໂດລາ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 86,83 ລ້ານໂດລາສະຫະລັດ, ຖອນເງິນ ຫຼື ໂອນເງິນໄປຝາກຢູ່ຕ່າງປະເທດ ຈຳນວນ 50,47 ລ້ານໂດລາສະຫະລັດ ລັດຖະບານຊຳລະເງິນກູ້ຢືມຕ່າງປະເທດ ຈຳນວນ 14,04 ລ້ານໂດລາສະຫະລັດ ແລະ ລາຍຈ່າຍອື່ນໆ ຈຳນວນ 11,36 ລ້ານໂດລາສະຫະລັດ).

3. **ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 557 ສະບັບທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 11 ສະບັບ, ລວມມູນຄ່າໂອນທັງໝົດ 305,67 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 23,07 ຕື້ກີບເທົ່າກັບ 7,01%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (01-05/07/2019) ມີທັງໝົດ 4.506 ຄັ້ງຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ: ເພີ່ມຂຶ້ນ 113 ຄັ້ງ, ລວມມູນຄ່າໂອນທັງໝົດ 1.542,23 ຕື້ກີບ ທຽບໃສ່ອາທິດຜ່ານມາເຫັນວ່າ ເພີ່ມຂຶ້ນ 261,81 ຕື້ກີບ ຫຼື ເທົ່າກັບ 20,44%. ໃນນັ້ນ, ກະຊວງການເງິນມີການໂອນເງິນຈຳນວນ 164 ຄັ້ງ, ລວມມູນຄ່າໂອນທັງໝົດ 134,37 ຕື້ກີບ ເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 261,81 ຕື້ກີບ ເທົ່າກັບ 20,44%.

4. **<u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 797,12 ຈຸດ ເພີ່ມຂຶ້ນ ຈາກ 794,02 ຈຸດ ຫຼື ເທົ່າກັບ 0,39% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 411.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,01 ຕື້ກວ່າກີບ ຫຼຸດລົງ 22,40% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 45,23% ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ PCD, VCL ແລະ LCC.

**<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ (21-27 ມິຖຸນາ 2019) | | | ອາທິດນີ້ (28 ມິຖຸນາ - 04 ກໍລະກົດ 2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 182.700 | 1.097.690.000 | 6.050 | 143.600 | 852.185.000 | 6.000 | -21,40 | -22,37 | -0,83 |
| **EDL-GEN** | 51.500 | 198.936.000 | 3.890 | 8.200 | 31.736.000 | 3.880 | -84,08 | -84,05 | -0,26 |
| **LWPC** | - | - | 7.150 | - | - | 7,150 | - | - | - |
| **PTL** | 1.200 | 710.000 | 500 | 251.400 | 119.650.000 | 500 | 20.850 | 16.752,11 | - |
| **SVN** | - | - | 2.100 | - | - | 2,050 | - | - | -2.38 |
| **PCD** | 600 | 606.000 | 1.010 | 5.600 | 5.926.000 | 1.110 | 833,33 | 877,89 | 9,90 |
| **LCC** | - | - | 2.150 | 300 | 669.000 | 2.230 | - | - | 3,72 |
| **MHTL** | 2.700 | 7.850.000 | 2.900 | 200 | 600,000 | 3,000 | -92.59 | -92.36 | 3.45 |
| **LAT** | - | - | 750 | - | - | 750 | - | - | - |
| **VCL** | 200 | 210.000 | 1.050 | 2.500 | 2.638.000 | 1.100 | 1.150 | 1.156,19 | 4,76 |
| ທັງໝົດ | 238.900 | 1.306.002.000 | | 411.800 | 1.013.404.000 | | 72,37 | -22,40 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- **ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈຳເປັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມສຳມະນາໃນຫົວຂໍ້: "Government Finance Statistics" ທີ່ປະເທດສະຫະລັດອາເມຣິກາ; ❷ກອງປະຊຸມສຳມະນາໃນຫົວຂໍ້: "Macroeconomic Accounts" ແລະ ❸ເຂົ້າຮ່ວມຝຶກອົບຮົມພາຍໃຕ້ຫົວຂໍ້: "Technology and Emerging Risks in Payment" ຢູ່ປະເທດ ອິນເດຍ.
- **ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປົ້ນອ້ອມຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມສ່ອງແສງສາຍພັກ-ສາຍລັດປະຈຳເດືອນ ມິຖຸນາ ປີ 2019; ❷ກອງປະຊຸມຄົ້ນຄວ້າປັບປຸງຮ່າງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ ແລະ ຮ່າງດຳລັດວ່າດ້ວຍວຽກງານການເງິນ ແລະ ການບັນຊີຂອງ ທຫລ; ❸ກອງປະຊຸມຄົ້ນຄວ້າເນື້ອໃນກະກຽມກອງປະຊຸມທະນາຄານທົ່ວປະເທດ ແລະ ❹ກອງປະຊຸມຄົ້ນຄວ້າປຶກສາຫາລືກ່ຽວກັບການປັບປຸງຮ່າງດຳລັດກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ.
- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ລົງກວດກາສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນ (ສກຈບ) ປະຈຳປີ 2018 ຈຳນວນ 02 ແຫ່ງຄື: ແມ່ຂອງ ແລະ ພັດທະນາ ແລະ ສົ່ງເສີມທຸລະກິດ; ❷ລົງກວດກາທະນາຄານນະໂຍບາຍ ແລະ ທະນາຄານ ບູຍອງລາວ ຈຳກັດ ປະຈຳປີ 2019; ❸ອອກຂໍ້ຕົກລົງວ່າດ້ວຍການຮັບຮອງກົດລະບຽບຂອງທະນາຄານສົ່ງເສີມກະສິກຳ; ❹ເຜີຍແຜ່ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການເຜີຍແຜ່ເອກະສານທາງການ ແລະ ຂໍ້ມູນຂ່າວສານຂອງທະນາຄານແຫ່ງ ສປປ ລາວ; ❺ລົງກວດກາຄວາມພ້ອມການໃຫ້ບໍລິການລະບົບຊຳລະສິນຄ້າ ແລະ ບໍລິການລະຫວ່າງປະເທດດ້ວຍ Prompt Pay ຂອງ ທຄຕລ ແລະ ❻ທຳລາຍທະນະບັດຂາດມຸ່ນເສື່ມຄຸນະພາບປະຈຳປີ 2019 ຢູ່ສາຂາພາກເໜືອແຂວງ ຊຽງຂວາງ ແລະ ສາຂາພາກກາງແຂວງສະຫວັນນະເຂດ. ນອກນັ້ນ, 3 ອົງການຈັດຕັ້ງມະຫາຊົນ ຂອງ ທຫລ ໄດ້ສ້າງຂະບວນການອອກແຮງງານລວມເພື່ອຕ້ອນຮັບວັນສາກົນ ເພື່ອຕ້ານການຄ້າມະນຸດວັນທີ 30 ກໍລະກົດ 2019.
- **ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**❶ຜູ້ອຳນວຍການທະນາຄານມາເລຍັນ ເບີຫັດ ສາຂາລາວ ແລະ ❷ຜູ້ອຳນວຍການໃຫຍ່ ບໍລິສັດ ສະຕາໂທລະຄົມ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມຄະນະກຳມະທິການຮ່ວມມືດ້ານເສດຖະກິດການຄ້າ ແລະ ວິທະຍາສາດ-ເຕັກນິກລາວ-ຣັດເຊຍ ຄັ້ງທີ XV ທີ່ປະເທດຣັດເຊຍ; ❷ກອງປະຊຸມລະດັບວິຊາການລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານປະຊາຊົນຈີນ ຢູ່ ສປ. ຈີນ; ❸ກອງປະຊຸມສຳມະນາພາຍໃຕ້ວຽກງານການເຊື່ອມໂຍງຂະແໜງການເງິນຂອງອາຊຽນໃນຫົວຂໍ້: "Early Warning System" ຢູ່ປະເທດສິງກະໂປ ແລະ ❹ກອງປະຊຸມສຳມະນາໃນຫົວຂໍ້: "ການສົ່ງເສີມຄວາມໂປ່ງໃສຂອງຜູ້ຮັບຜົນປະໂຫຍດທີ່ແທ້ຈິງ" ຢູ່ປະເທດມາເລເຊຍ.
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມແນະນຳການຈັດຕັ້ງປະຕິບັດແຜນກຳນົດພະນັກງານ; ❷ກອງປະຊຸມປຶກສາຫາລືກ່ຽວກັບການກະກຽມເງື່ອນໄຂໃນການເຂົ້າເປັນສະມາຊິກກອງທຶນປະກັນ

ສັງຄົມແຫ່ງຊາດ; ❸ກອງປະຊຸມສ່ອງແສງລາຍງານຕໍ່ຄະນະເລຂາທິການສູນກາງພັກ; ❹ກອງປະຊຸມວຽກງານແກ້ໄຂບັນຫາຕິດພັນກັບພາສີທີ່ດິນ; ❺ກອງປະຊຸມປຶກສາຫາລື ກ່ຽວກັບວຽກງານການຄົ້ນຄວ້ານິຕິກຳຄຸ້ມຄອງເງິນຄຣິບໂຕ; ❻ກອງປະຊຸມສຳມະນາກ່ຽວກັບມາດຕະຖານສາກົນດ້ານການລາຍງານການເງິນ (IFRS 9) ແລະ ບົດແນະນຳການບັນທຶກບັນຊີ ແລະ ❼ພິທີລົງນາມສັນຍາເງິນກູ້ເພື່ອສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງໃນ ສປປ ລາວ ລະຫວ່າງ ທຫລ ແລະ ທະນາຄານພັດທະນາແຫ່ງຊາດຈີນ (CDB) ແລະ ພິທີປະດັບຫຼຽນການມິດຕະພາບໃຫ້ແກ່ CDB.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ພູມມະລີ ສີຣິພົນເດດ